ສຳນັກງານໃຫຍ່

ເລກທີ: 0864/ທຄຕລ.2026.....
ນະຄອນຫຼວງວຽງຈັນ, ວັນທີ:.....13.MAR.2026.....

ໜັງສືແຈ້ງການ

ຮຽນ: ທ່ານຜູ້ຖືຮຸ້ນ ທຄຕລ ທີ່ເຄົາລົບ ແລະ ທີ່ນັບຖື,

ເລື່ອງ: ການຂາຍຮຸ້ນ ທຄຕລ ຂອງຜູ້ບໍລິຫານ ທຄຕລ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ສະບັບປັບປຸງ) ເລກທີ 27/ຄຄຊ, ລົງວັນທີ 29/03/2022
- ອີງຕາມ ເອກະສານການລາຍງານການຂາຍຮຸ້ນຂອງ ທ່ານຮອງຜູ້ອຳນວຍການ ຄົ້ງວັນທີ 11/03/2026

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍຖືເປັນກຽດຮຽນລາຍງານມາຍັງ ທ່ານຊາບວ່າ ເພື່ອປະຕິບັດຕາມຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຄຳແນະນຳການປະຕິບັດການຄຸ້ມຄອງບໍລິຫານບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ, ທຄຕລ ຂໍຖືເປັນກຽດລາຍງານການຂາຍຮຸ້ນຂອງ ຜູ້ບໍລິຫານ ທຄຕລ ຈຳນວນໜຶ່ງທ່ານໂດຍມີລາຍລະອຽດດັ່ງນີ້:

- ຊື່ ແລະ ນາມສະກຸນ: ທ່ານ ກົງສັກ ສຸພອນສີ
- ຕຳແໜ່ງ: ຮອງຜູ້ອຳນວຍການ ທຄຕລ
- ປະເພດທຸລະກຳ: ຂາຍຮຸ້ນ ທຄຕລ
- ຈຳນວນ: 231,600 (ທຽບເທົ່າ 0.014% ຂອງຈຳນວນຮຸ້ນທັງໝົດ)
- ການຖືຄອງຮຸ້ນໃນປັດຈຸບັນ: 24,300 ຮຸ້ນ
- ຈຸດປະສົງ: ຂາຍຮຸ້ນທົ່ວໄປ ຕາມກົນໄກ ແລະ ລາຄາຕະຫຼາດຂັ້ນສອງປົກກະຕິ

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານເພື່ອຊາບ.

ຜູ້ອຳນວຍການ

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ນ. ບົວໄພວັນ ນັນດາວົງ